# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 01 ກໍຣະກົດ 2007 ( 07-01-2007 )

---

## ຮ່ວມກັນເຮົາຢູ່:

**ຂໍ້ພຣະຄັມພີໃນບົດຮຽນ:** ກິຈການ 2:41-47; 4:23-24, 29-35

**ຄຳຖາມແຫ່ງຊີວິດ:** ຂ້າພະເຈົ້າຈະສນັບສນູນຊ່ອຍເຫລືອແກ່ຜູ້ທີ່ເຊື່ອຄົນອື່ນ ໆໄດ້ຢ່າງໃດ?

**ຄວາມຈິງໃນພຣະຄັມພີ:** ຜູ້ທີ່ເຊື່ອທັງຫລາຍສະແດງຄວາມເປັນນ້ຳນຶ່ງໃຈດຽວກັນອອກໂດຍການສນັບສນູນຊຶ່ງກັນ ແລະກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນມາເພື່ອຊ່ອຍໃຫ້ທ່ານເຮັດໜ້າທີ່ຂອງທ່ານໃນຄຣິສຕະຈັກຂອງທ່ານຕາມທີ່ພຣະເຈົ້າໃຫ້ໂດຍ:

- ການເລີ້ມຕົ້ນໃນທາງທີ່ທ່ານສາມາດສນັບສນູນຊ່ອຍເຫລືອຜູ້ທີ່ເຊື່ອດ້ວຍກັນແລະ
- ຄ່ອຍພັດທະນາໃຫ້ການສນັບສນູນຍາດຕິພີ່ນ້ອງພ້ອມກັນກັບຜູ້ທີ່ເຊື່ອດ້ວຍກັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:** ໃຫ້ແນະນຳນັກຮຽນເສີມສ້າງຊຶ່ງກັນ ແລະກັນດ້ວຍຄວາມສມານສາມັກຄີ.
- ວາງແຜນວ່າໃນອາທິດນີ້ຂ້າພະເຈົ້າຈະໝູນໃຈ ແລະເສີມສ້າງຜູ້ທີ່ເຊື່ອດ້ວຍກັນຢ່າງໃດ?
- ບົດຮຽນນີ້ຈະຊ່ອຍທ່ານໃຫ້ບັນລຸເຖິງຄວາມໝັ້ນຄົງການຢູ່ຮ່ວມກັນດ້ວຍຄວາມຮັກ.

### 1. ເປັນອັນນຶ່ງອັນດຽວກັນໃນການຮ່ວມສາມັກຄີທັມ: (ກິຈການ 2:42-47)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 2:42-47

2) ຂຽນຄຳວ່າ: "**ສາມັກຄີທັມ,**" "**ພຣະຜູ້ເປັນເຈົ້າ,**" "**ຄາບເຂົ້າແລງ,**" **ແລະ** "**ອະທິຖານ.**" ໃສ່ກະດານ

ໂດຍໃຊ້ສີຕ່າງກັນຂຽນ.

**ຄຳຖາມ:** 1. ທັງສີ່ປະໂຍກທີ່ຂຽນໄວ້ໃນກະດານນີ້ໄດ້ເລົ່າເຖິງຄວາມສາມັກຄີກັນໃນຄຣິສຕະຈັກເລີ້ມແຣກຢ່າງໃດ? ແລະເຕີບໃຫຍ່ຂຍາຍຕົວຂື້ນມາຢ່າງໃດ?

2. ການຮ່ວມສາມັຄີທັມຮ່ວມກັນເປັນປະຈຳມີຄວາມສຳຄັນຕໍ່ການຊ່ອຍເຫລືອຊຶ່ງກັນແລະຕໍ່ຄວາມເປັນມິດກັນຢ່າງໃດ?

**ແນະນຳ:** ຖ້າທ່ານຍັງບໍ່ທັນມີກຸ່ມ " **ສາມັກຄີທັມ, ກຸ່ມຮຽນພຣະຄັມພີ, ກຸ່ມອະທິຖານ** " ໃນຄຣິສຕະຈັກຂອງທ່ານກໍຂໍໃຫ້ຈັດຕັ້ງຂື້ນ, ເພື່ອທຸກຄົນໃນຄຣິສຕະຈັກຂອງທ່ານຈະໄດ້ຈະເຣີນຂື້ນໃນພຣະເຈົ້າດ້ວຍກັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 2:42-47

1. ແມ່ນຫຍັງທີ່ເຮັດໃຫ້ຄຣິສຕະຈັກໃນຍຸກແຣກແຜ່ຂຍາຍອອກ?
2. ຄຣິສຕະຈັກຂອງທ່ານມີສັນຍາລັກອັນໃດທີ່ຄືກັບຄຣິສຕະຈັກໃນສມັຍເລີ້ມແຣກ?
3. ຈົ່ງອະທິບາຍເຖິງປະສົບການຂອງທ່ານທີ່ມີຢູ່ໃນໃຈຂອງທ່ານທີ່ພົວພັນກັບພຣະທັມໃນຕອນນີ້?
4. ຈົ່ງບອກສິ່ງທີ່ເປັນອຸປສັກໃນການສາມັກຄີທັມບາງຢ່າງມາວ່າແມ່ນຫຍັງແທ້?
5. ທ່ານແລະຄຣິສຕະຈັກຂອງທ່ານຈະຈັບມືຖືແຂນກັນກຳຈັດສິ່ງທີ່ກີດຂວາງເຫລົ່ານີ້ໄດ້?

## 2. <u>ເປັນອັນນຶ່ງອັນດຽວກັນໃນການອ້ອນວອນ:</u> (ກິຈການ 4:23-24, 29-31)

1. ຂໍໃຫ້ອາສາສມັກອ່ານພຣະທັມ ກິຈການ 4:23-24,29-31 ແລ້ວ
 ມາໄຈ້ແຍກລະຫວ່າງຄຳທີ່ວ່າ " **ເຂົາ** " ( ເປໂຕ ແລະ ໂຢຮັນ ຂໍ້ທີ23 ) ແລະຄຳວ່າ " **ເຂົາ** "
 ( ຮວມທັງຜູ້ທີ່ເຊື່ອທັງຫລາຍດ້ວຍໃນຂໍ້ທີ 24 ) ໃຫ້ໄດ້ຄວາມໝາຍຢ່າງແຈ່ມແຈ້ງ.
 ( ຂໍ້ທີ 31 ) ໄດ້ບົ່ງບອກວ່າພຣະວິນຍານບໍຣິສຸດໄດ້ຢູ່ກັບເຂົາ ແລະພລັງອຳນາດຂອງພຣະວິນຍານ
 ບໍຣິສຸດໄດ້ໃຫ້ຈິດໃຈຂອງເຂົາເກີດມີຄວາມກ້າຫານ.
2. ຄວາມໝາຍຂອງການຢູ່ຮ່ວມກັນເປັນຈຸດປະສົງຂອງຄຣິສຕະຈັກ ແລະຕ້ອງອະທິຖານຮ່ວມກັນ, ພິເສດນັ້ນກໍແມ່ນເພື່ອນຳຜູ້ທີ່ຕິດຕາມພຣະເຢຊູເຂົ້າໃກ້ພຣະອົງ ແລະຕໍ່ກັນ ແລະກັນ.
3. ຄວາມຈິງທີ່ຜູ້ປະກາດພຣະທັມອະທິຖານທູນຂໍຈາກພຣະເຈົ້າ. ບໍ່ແມ່ນເພື່ອເນື້ອໜັງຢ່າງດຽວ, ແຕ່ຕ້ອງຂໍຄວາມຄວາມກ້າຫານໃນການປະກາດຂ່າວປະເສີດຂອງພຣະອົງ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ກິຈການ 4:23-24, 29-31)

1. ທ່ານເຄີຍອະທິຖານເພື່ອຜູ້ຮັບຝຸ້ພຣະຄຣິດທີ່ຖືກຂົ່ມເຫງ ແລະທົນທຸກທໍຣະມານບໍ່?
2. ທ່ານໄດ້ຮັບຜົນປໂຍດຈາກການອະທິຖານເພື່ອທ່ານຂອງຜູ້ທີ່ເຊື່ອອື່ນ ໆ ບໍ່?
3. ການອະທິຖານຮ່ວມກັນໄດ້ຊ່ອຍທ່ານແນວໃດ?
4. ວາດພາບເບິ່ງຄຣິສຕະຈັກຂອງທ່ານເອງວ່າ ການອະທິຖານນັ້ນເຮັດໃຫ້ມີຄວາມສົດຊື່ນເໝືອນນ້ຳສົດ ໆ ຢູ່ໃນຈອກແກ້ວ ແລະຈົ່ງສັງເກດເບິ່ງວ່າມັນຢູ່ໃນຣະດັບໃດ?
5. ທ່ານຈະຕ້ອງໄດ້ອະທິຖານເພີ້ມຂື້ນຈາກຣະດັບປະຈຸບັນໃຫ້ຈະເຣີນຂື້ນທາງດ້ານຈິດວິນຍານ ແລະໃຫ້ມີພລັງເພີ້ມຂື້ນໄດ້ຢ່າງໃດ?

## 3. <u>ເປັນອັນນຶ່ງອັນດຽວກັນເພື່ອຊ່ອຍເຫລືອຄົນອື່ນ:</u> (ກິຈການ 4:32-35)

1. ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ກິຈການ 4:32-35

**ອະທິບາຍ:** ການທີ່ພວກເຮົາໃຊ້ຂອງປະທານ ແລະຂອງມີຄ່າຂອງພວກເຮົາໄປໂຮມໄວ້ກັບຜູ້ທີ່ເຊື່ອທັງຫລາຍ ນັ້ນເປັນແສງສວ່າງໃຫ້ກັບຄົນອື່ນ, ໃນເມື່ອເຮົາມີຄວາມເຕັມໃຈພ້ອມທີ່ຈະໃຫ້ ແລະຮັບກໍເໝືອນກັບຄຣິສຕະຈັກໃນຍຸກແຮກ, ສະມາຊິກມີຄວາມຕ້ອງການພົບພຣະເຈົ້າ ແລະຖວາຍກຽດແດ່ພຣະເຈົ້າ.

**ຄໍາຖາມ:** 1. ແມ່ນເຄື່ອງໃຊ້ປະເພດໃດທີ່ຄຣິສຕະຈັກຂອງທ່ານທີ່ສໍາຄັນຈະຕ້ອງໃຊ້?

**ເພື່ອຄວາມກະຈ່າງແຈ້ງ:** " ພຣະຄຸນອັນຍິ່ງໃຫຍ່ " ( ຂໍ້ 33 ) ໝາຍຄວາມວ່າ ພຣະເຈົ້າເປັນພຣະຄຸນເປັນພຍານຫລັກຖານອັນສົມບູນໃຫ້ແກ່ຄົນທີ່ເຊື່ອໃນພຣະເຢຊູຄຣິດທັງຫລາຍ. ເພາະຜົນທີ່ໄດ້ຮັບຈາກສາຍສັມພັນ " ການຖວາຍກຽດແດ່ພຣະເຈົ້ານັ້ນກໍຄື "ໄດ້ຮັບພຣະຄຸນຈາກພຣະເຈົ້າ ແລະການຈະເຣີນເຕີບໂຕຂຶ້ນຂອງຄຣິສຕະຈັກ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 4:32-35

1. ທ່ານຈະເຮັດແນວໃດໃຫ້ຄວາມຮັກຂອງທ່ານເຂັ້ມແຂງຂຶ້ນໃນພຣະເຈົ້າ?
2. ໃນຄຣິສຕະຈັກຂອງທ່ານມີການໃຫ້ການຊ່ອຍເຫລືອພາຍໃນ ແລະພາຍນອກຢ່າງໃດແດ່?
3. ທ່ານຈະໃຫ້ການສນັບສນູນອັນເໝາະສົມແກ່ອ້າຍນ້ອງອື່ນ ໆໄດ້ຢ່າງໃດ?
4. ທ່ານສັງເກດໄດ້ບໍ່ວ່າໃນຄຣິສຕະຈັກເລີ້ມແຮກນັ້ນເຂົາເຈົ້າມີຄວາມເປັນນໍ້າໜຶ່ງໃຈດຽວກັນຢ່າງໃດ?
5. ໃນຄຣິສຕະຈັກຂອງທ່ານໄດ້ນໍາເອົາແບບຢ່າງຂອງຄຣິສຕະຈັກເລີ້ມແຮກມາໃຊ້ຫລືບໍ່?

**<u>ສລູບ</u>:**

. ຄວາມຈໍາເປັນທີ່ເຮົາຕ້ອງທໍານັ້ນເຮົາຕ້ອງເຮັດພາກສ່ວນຂອງເຮົາ, ສົ່ງເສີມຊ່ອຍເຫລືອຜູ້ທີ່ເຊື່ອຮ່ວມກັນໃນຄຣິສຕະຈັກ.

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ຄວາມເປັນນໍ້າໜຶ່ງໃຈດຽວກັນຂອງຄຣິສຕຽນເປັນພື້ນຖານການອຸທິດຕົນຮ່ວມກັນ- ການອຸທິດຕົນຕໍ່ພຣະເຈົ້າ ແລະອຸທິດຕົນຕໍ່ກັນ ແລະກັນ.
- ໃນຍາມປະສົບກັບຄວາມທຸກທໍຣະມານ, ຜູ້ທີ່ເຊື່ອທັງຫລາຍຄວນໂຮມກັນອະທິຖານ, ສັຣເສີນພຣະເຈົ້າໃຫ້ຣິດອໍານາດຂອງພຣະອົງປົກປ້ອງຄຸ້ມຄອງ ແລະທູນຂໍຄວາມກ້າຫານທີ່ຈະປະກາດຂ່າວປະເສີດຂອງພຣະອົງ.
- ຜູ້ທີ່ເຊື່ອທັງຫລາຍສົມຄວນເປັນອັນນຶ່ງອັນດຽວກັນໃນການຊອກຫາຊ່ອງທາງໃຊ້ວິທີການຊ່ອຍເຫລືອຊຶ່ງກັນແລະກັນໃນຍາມຈໍາເປັນ, ໂດຍສະເພາະຢ່າງຍິ່ງຜູ້ທີ່ຢູ່ໃນກາຍດຽວກັນຄື: ໃນຮ່າງກາຍຂອງພຣະຄຣິດ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )